ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກ ອຸດສາຫະກຳ ແລະ ການຄ້າ

0600

ເລກທີ........../ອຄ.ນວ.ຄພນ

ວັນທີ..12....ພຶດສະພາ 2021

# ແຈ້ງການແນະນຳ

ເຖິງ : ພະນັກງານ, ທະຫານ, ຕຳຫຼວດ ແລະ ຕະຫຼອດທົ່ວພໍ່ແມ່ປະຊາຊົນໃນນະຄອນຫຼວງວຽງຈັນ.

ເລື່ອງ : ຈຸດບໍລິການຈຳໜ່າຍຊີ້ນໝູແລະເຂົ້າກິນໃນໄລຍະສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19) ຮອດວັນທີ 20 ພຶດສະພາ 2021.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ວ່າດ້ວຍການຄຸ້ມ, ຄອງລາຄາ ສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ ແຈ້ງການ ເລກທີ 462/ຫລນຍ, ລົງວັນທີ 05 ພຶດສະພາ 2021 ທິດຊີ້ນຳກ່ຽວກັບການສືບຕໍ່ປະຕິບັດຄຳສັ່ງ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການ ສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ-19 (COVID-19) ຮອດວັນທີ 20 ພຶດສະພາ 2021.

ເພື່ອປະຕິບັດຕາມທິດຊີ້ນຳຂອງຂັ້ນເທິງໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງລາຄາ ແລະ ຕິດຕາມສິນຄ້າໃນຕະຫຼາດໃຫ້ມີປະສິດທິຜົນ ແລະ ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານລາຄາ, ມີຄວາມໝັ້ນຄົງທາງດ້ານການສະໜອງສິນຄ້າພຽງພໍກັບຄວາມຕ້ອງການ, ບໍ່ໃຫ້ມີຜົນກະທົບບໍ່ດີຕໍ່ສັງຄົມ,ຫຼີກລ່ຽງການສວຍໂອກາດຂຶ້ນລາຄາສິນຄ້າ ແລະ ການເກັງກຳໄລທີ່ບໍ່ສົມເຫດສົມຜົນເປັນການເອົາລັດເອົາປຽບຜູ້ບໍລິໂພກ. ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ຮ່ວມມືກັບລັດວິສາຫະກິດ ແລະ ຜູ້ປະກອບການ ກຳນົດຈຸດບໍລິການຈຳໜ່າຍໃນລາຄາຊີ້ນຳ ແລະ ການຈຳໜ່າຍທົ່ວໄປ ດັ່ງລາຍລະອຽດລຸ່ມນີ້ :

1. **ຈຸດຈຳໜ່າຍຂອງບໍລິສັດລັດວິສາຫະກິດສະບຽງອາຫານນະຄອນຫຼວງວຽງຈັນ ນຳເອົາສິນຄ້າປະເພດເຂົ້າກິນແລະ ຊີ້ນໝູອອກ ຈຳໜ່າຍຢູ່ໃນນະຄອນຫຼວງວຽງຈັນໃນ 02 ຈຸດ ດັ່ງນີ້:**

• ຈຸດຈຳໜ່າຍທີ 1 : ຢູ່ບ້ານສີທອນ, ເມືອງຈັນທະບູລີ, (ເວລາ 8:00 ໂມງ-17:00 ໂມງ, ວັນຈັນ - ວັນສຸກ) ເບີໂທຕິດຕໍ່: 020 2222 3339; 020 5564 6928.

• ຈຸດຈຳໜ່າຍທີ 2 : ຢູ່ຕະຫຼາດບຶງທາດຫຼວງມີສະເພາະຊີ້ນໝູ ( ເວລາ 8:00 ໂມງ-17:00 ໂມງ, ວັນຈັນ-ວັນສຸກ)

❖ ລາຄາເຂົ້າກິນ

- ເຂົ້າສານໜຽວປະເພດ 1 — ລາຄາ 35.000 ກີບ/ຖົງ( 1ຖົງ= 5ກິໂລ)
- ເຂົ້າສານຈ້າວ — ລາຄາ 42.000 ກີບ/ຖົງ( 1 ຖົງ= 5ກິໂລ)

❖ ລາຄາຊີ້ນໝູ

- ຊີ້ນໝູປະເພດ 1 — ລາຄາສູງສຸດ 48.000 ກີບ/ກິໂລ
- ຊີ້ນໝູປະເພດ 2 — ລາຄາສູງສຸດ 44.000 ກີບ/ກິໂລ

2. **ຈຸດຈຳໜ່າຍຂອງບໍລິສັດຊີພີລາວຈຳກັດນຳເອົາສິນຄ້າປະເພດ ຊີ້ນໝູ ອອກຈຳໜ່າຍພາຍໃນຮ້ານຊີພີຟັອກຊ໌ອບ 20 ຮ້ານ ຢູ່ໃນນະຄອນຫຼວງວຽງຈັນຮອດວັນທີ 23/05/2021 (ເວລາ 6:00 ໂມງ-19: ໂມງທຸກໆວັນ)ຄືດັ່ງນີ້:**

| | | | |
|---|---|---|---|
| ກະດູກຂ້າງໝູ | ລາຄາ 47.500 ກີບ/ກິໂລ | ສັນໃນ | ລາຄາ 44.500 ກີບ/ກິໂລ |
| ກະດູກອ່ອນ | ລາຄາ 47.500 ກີບ/ກິໂລ | ຊີ້ນສະໂພກ | ລາຄາ 39.500 ກີບ/ກິໂລ |
| ຄໍໝູປີ້ງ | ລາຄາ 47.500 ກີບ/ກິໂລ | ຊີ້ນບ່າໄຫຼ່ | ລາຄາ 38.500 ກີບ/ກິໂລ |
| ສັນຄໍ | ລາຄາ 47.500 ກີບ/ກິໂລ | ຊີ້ນສອງຊັ້ນ | ລາຄາ 39.500 ກີບ/ກິໂລ |
| ສັນນອກ | ລາຄາ 41.500 ກີບ/ກິໂລ | ຊີ້ນສາມຊັ້ນລອກໜັງ | ລາຄາ 44.500 ກີບ/ກິໂລ |
| ສັນນອກຕິດໜັງ | ລາຄາ 44.500 ກີບ/ກິໂລ | ຊີ້ນສາມຊັ້ນ | ລາຄາ 46.500 ກີບ/ກິໂລ |

3. **ຈຸດຈຳໜ່າຍຂອງບໍລິສັດຄຳແພງເພັດ ແຈ້ງສະຫວ່າງສົ່ງເສີມການກະເສດຂາອອກ - ຂາເຂົ້າ ຈຳກັດຜູ້ດຽວ ນຳເອົາສິນຄ້າປະເພດ ເຂົ້າກິນ ອອກຈຳໜ່າຍຢູ່ໃນນະຄອນຫຼວງວຽງຈັນຄືດັ່ງນີ້:**

• ຈຸດຈຳໜ່າຍຢູ່ບ້ານນາສ້ຽວ, ເມືອງນາຊາຍທອງ ຫຼື ຕະຫຼາດແຈ້ງສະຫວ່າງ, (ເວລາ 8:00 ໂມງ-17:00 ໂມງ, ວັນຈັນ-ວັນອາທິດ). ເບີໂທຕິດຕໍ່: 020 9990 2383; 020 9977 5299.

❖ **ລາຄາເຂົ້າກິນ**

| | |
|---|---|
| ○ ເຂົ້າສານໜຽວປະເພດ 1 | ລາຄາ 35.000 ກີບ/ຖົງ( 1ຖົງ= 5ກິໂລ) |
| ○ ເຂົ້າສານໜຽວປະເພດ 2 | ລາຄາ 32.500 ກີບ/ຖົງ( 1 ຖົງ= 5ກິໂລ) |
| ○ ເຂົ້າສານຈ້າວ | ລາຄາ 42.000 ກີບ/ຖົງ( 1 ຖົງ= 5ກິໂລ) |
| ○ ເຂົ້າສານຈ້າວຫອມມະລິປະເພດ 1 | ລາຄາ 50.000 ກີບ/ຖົງ( 1 ຖົງ= 5ກິໂລ) |
| ○ ເຂົ້າສານຈ້າວຫອມມະລິປະເພດ 2 | ລາຄາ 45.000 ກີບ/ຖົງ( 1 ຖົງ= 5ກິໂລ) |

4. **ຈຸດຈຳໜ່າຍພືດຜັກອິນຊີດັ່ງນີ້ :**

- ດົງນາໄຊກ ຂາຍໝົດມື້ ວັນຈັນ ແລະ ວັນພະຫັດ
- ຕະຫຼາດຊ້າງຄູ້ ຂາຍຕອນບ່າຍ ວັນຈັນ ແລະ ວັນພະຫັດ
- ຕະຫຼາດທ່ອຍທົ່ງ ຂາຍຕອນບ່າຍ ວັນເສົາ
- ຕະຫຼາດຫຼັກ 8 ສີມຫວັງ ຂາຍທາງອອນໄລ ແລະ ສົ່ງເປັນມື້.
- ຮ້ານຄ້າກອງທັບຫຼັກ5 ຂາຍຕອນບ່າຍ ວັນຈັນ ແລະ ວັນພະຫັດ.
- ຕະຫຼາດທົ່ງຂັນຄຳ ຂາຍຕອນເຊົ້າ ວັນອາທິດ.
- ຕະຫຼາດ ຊໍາເກດລາວສຳພັນ ຂາຍຕອນເຊົ້າ ວັນອາທິດ.
- ເດີ່ນສູນການຄ້າລາວ-ໄອເຕັກ ຂາຍຕອນເຊົ້າ ວັນພຸດ ແລະ ວັນເສົາ

\- ເບີໂທມືຖື: 020 55216244 ທ່ານ ຄຳພູ ພົນທະບຸນ ຫົວໜ້າກຸ່ມກະສິກຳອິນຊີ ຂອງນະຄອນຫຼວງວຽງຈັນ

5. **ການຈຳໜ່າຍທົ່ວໄປກໍ່ມີການບໍລິການປົກກະຕິ : ຕະຫຼາດ, ສູນການຄ້າ, ຊັບພະສິນຄ້າ ແລະ ຮ້ານຄ້າຍ່ອຍທີ່ທາງການອະນຸຍາດ.**

ດັ່ງນັ້ນ, ຈຶ່ງແຈ້ງການແນະນຳມາຍັງທ່ານເພື່ອຊາບ ແລະ ສາມາດໄປຊົມໃຊ້ບໍລິການ.

**ຫົວໜ້າພະແນກ**

ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ



ນ. ວັນມະນີ ພົມມະສານ